ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ ເລກທີ 159 /ສພຊ.ຊຍ

ໄຊຍະບູລີ, ວັນທີ 30 ທັນວາ 2024

# ມະຕິ

## ກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງ ເອົາບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020.
- ອີງຕາມ ບົດລາຍງານຂອງອົງການປົກຄອງແຂວງ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II, ຄັ້ງວັນທີ 25 ທັນວາ 2024.

ຜ່ານການປະກອບຄຳເຫັນ, ຄົ້ນຄວ້າພິຈາລະນາຢ່າງເລິກເຊິ່ງ ຂອງສະມາຊິກສະພາປະຊາຊົນແຂວງ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ກ່ຽວກັບ ການສະຫຼຸບຂາດຕົວແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025 ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ສະພາປະຊາຊົນແຂວງ ຊຸດທີ II.

## ກອງປະຊຸມຕົກລົງ:

**ມາດຕາ 1 ຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການສະຫຼຸບຂາດຕົວແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023.**

ກອງປະຊຸມ ສະພາປະຊາຊົນແຂວງ ສະແດງຄວາມຊົມເຊີຍອົງການປົກຄອງແຂວງ ທີ່ໄດ້ເອົາໃຈໃສ່ຊີ້ນຳໃນການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງຢ່າງຕັ້ງໜ້າ ແລະ ເຫັນດີຕໍ່ການສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2023 ດັ່ງນີ້:

1. **ລາຍຮັບທັງໝົດ:** ສາມາດປະຕິບັດລາຍຮັບໄດ້ທັງໝົດ: 1.769,31 ຕື້ກີບ, ເທົ່າກັບ 116,81% ຂອງແຜນການປີ.
   - **ລາຍຮັບພູດສູນກາງ:** ປະຕິບັດໄດ້ 1.100,76 ຕື້ກີບ, ເທົ່າກັບ 108,98% ຂອງແຜນການປີ.
   - **ລາຍຮັບພາຍໃນແຂວງ:** ປະຕິບັດໄດ້ 668,54 ຕື້ກີບ, ເທົ່າກັບ 132,45% ຂອງແຜນການປີ.
2. **ລາຍຈ່າຍທັງໝົດ:** ປະຕິບັດໄດ້ 601,44 ຕື້ກີບ, ເທົ່າກັບ 115,63% ຂອງແຜນການປີ.
3. **ດຸ່ນດ່ຽງງົບປະມານ:** ປະຕິບັດໄດ້ 67,10 ຕື້ກີບ.

**ມາດຕາ 2 ຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024.**

ກອງປະຊຸມສະພາປະຊາຊົນແຂວງ ເຫັນດີເປັນເອກະພາບ ຕໍ່ບົດລາຍງານຂອງອົງການປົກຄອງແຂວງ ແລະ ສະແດງຄວາມຊົມເຊີຍ ທີ່ອົງການປົກຄອງແຂວງ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດແຜນ



ສະແກນດ້ວຍ CamScanner

ງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ຢ່າງຕັ້ງໜ້າ ແລະ ມີຜົນສຳເລັດຫຼາຍດ້ານ ໂດຍສະເພາະການເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍ ສາມາດປະຕິບັດໄດ້ນີ້:

1. **ລາຍຮັບທັງໝົດ:** ສາມາດປະຕິບັດລາຍຮັບໄດ້ທັງໝົດ: 2.347,38 ຕື້ກີບ, ເທົ່າກັບ 112,19% ຂອງແຜນການປີ.
   - **ລາຍຮັບພູດສູນກາງ**: ປະຕິບັດໄດ້ 1.175,98 ຕື້ກີບ, ເທົ່າກັບ 85,40% ຂອງແຜນການປີ.
   - **ລາຍຮັບພາຍໃນແຂວງ**: ປະຕິບັດໄດ້ 1.171,40 ຕື້ກີບ, ເທົ່າກັບ 163,77% ຂອງແຜນການປີ.
2. **ລາຍຈ່າຍທັງໝົດ:** ປະຕິບັດໄດ້ 681,63 ຕື້ກີບ, ເທົ່າກັບ 129,68% ຂອງແຜນການປີ.
3. **ດຸ່ນດ່ຽງງົບປະມານ:** ດຸ່ນຄືນໃຫ້ສູນກາງປະຕິບັດໄດ້ 81,90 ຕື້ກີບ.

**ມາດຕາ 3 ຮັບຮອງເອົາ ທິດທາງແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2025.**

ກອງປະຊຸມຮັບຮອງເອົາແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2025 ຕາມການສະເໜີຂອງອົງການປົກຄອງແຂວງ ດັ່ງນີ້:

1. **ລາຍຮັບທັງໝົດ**: 2.765,39 ຕື້ກີບ, ໃນນີ້:
   - **ລາຍຮັບພູດສູນກາງ**: 1.365,20 ຕື້ກີບ.
   - **ລາຍຮັບຂອງແຂວງທັງໝົດ**: 1.400,10 ຕື້ກີບ.
2. **ລາຍຈ່າຍທັງໝົດ**: 754,14 ຕື້ກີບ, (ລວມລາຍຈ່າຍການລົງທຶນຂອງລັດ) ໃນນີ້:
   - ເງິນເດືອນ (ພາກ 60): 519,87 ຕື້ກີບ.
   - ເງິນນະໂຍບາຍ (ພາກ 61): 77,67 ຕື້ກີບ.
   - ເງິນບໍລິຫານລັດ (ພາກ 62): 60,28 ຕື້ກີບ.
   - ເງິນດັດສົມ-ສົ່ງເສີມ (ພາກ 63): 15,39 ຕື້ກີບ.
   - ເງິນແຮບັ້ງເອີນອື່ນໆ (ພາກ 65): 3,10 ຕື້ກີບ.
   - ເງິນຊື້ຊັບສົມບັດຄົງທີ່ (ພາກ 66): 0,80 ຕື້ກີບ.
   - ເງິນລົງທຶນຂອງລັດ (ພາກ 67): 77,02 ຕື້ກີບ.
3. **ດຸ່ນດ່ຽງງົບປະມານ**: ດຸ່ນຄືນໃຫ້ສູນກາງ 654,94 ຕື້ກີບ.

**ມາດຕາ 4 ຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2025.**

ກອງປະຊຸມຮັບຮອງເອົາ ມາດຕະການຈັດຕັ້ງປະຕິບັດ ຕາມການລາຍງານຂອງອົງການປົກຄອງແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ໃຫ້ບັນລຸຕາມແຜນ, ກອງປະຊຸມສະເໜີໃຫ້ເອົາໃຈໃສ່ ບາງມາດຕະການເພີ່ມເຕີມດັ່ງນີ້:

1. **ດ້ານລາຍຮັບ.**
   - 1.1 ສືບຕໍ່ສຳຫຼວດຖານລາຍຮັບຄືນໃໝ່ໃຫ້ຖືກຕ້ອງຊັດເຈນ ເພື່ອເປັນການຄາດຄະເນແຜນການຈັດເກັບລາຍຮັບເຂົ້າງົບປະມານພາຍໃນແຂວງ ເພື່ອສາມາດກຸ້ມລາຍຈ່າຍເທື່ອລະກ້າວ.
   - 1.2 ສືບຕໍ່ຊຸກຍູ້ ແລະ ແກ້ໄຂບັນດາລາຍຮັບ-ລາຍຈ່າຍ ຕາມຜົນການກວດສອບ ປີ 2023 ໃຫ້ຫຼຸດໜ້ອຍຖ້ອຍລົງ ໂດຍສະເພາະ ແມ່ນການແກ້ໄຂໜີ້ຄັ່ງເງິນ, ລາຍຮັບທີ່ຄ້າງມອບ ແລະ ອື່ນໆ.
   - 1.3 ເພີ່ມທະວີ ອຳນວຍຄວາມສະດວກໃນການນຳເຂົ້າ-ສົ່ງອອກ ການແຈ້ງພາສີສິນຄ້າເຄື່ອງຂອງ ຜ່ານດ່ານ ແລະ ປັບປຸງຂອດບໍລິການຢູ່ໃນດ່ານໃຫ້ມີຄວາມກະທັດຮັດ, ມີຄວາມສະດວກ, ວ່ອງໄວ.
   - 1.4 ສືບຕໍ່ຕ້ານສະກັດກັ້ນໃນການຄຸ້ມຄອງການລັກລອບສິນຄ້າໜີພາສີ, ການຫຼົບຫຼີກພັນທະອາກອນ ແລະ ການນຳໃຊ້ມາດຕະການຕໍ່ຜູ້ທີ່ລະເມີດລະບຽບກົດໝາຍ, ທຸລະກິດຄ້າງມອບພັນທະ ແລະ ຫົວໜ່ວຍງົບປະມານໃນແຕ່ລະຂັ້ນໃຫ້ເຂັ້ມງວດ.
2. **ການຄຸ້ມຄອງລາຍຈ່າຍ**
   - 2.1 ສືບຕໍ່ເອົາໃຈໃສ່ການປະຕິບັດນະໂຍບາຍດ້ານລາຍຈ່າຍໃຫ້ມີຄວາມເໝາະສົມ ແລະ ສົມດູນກັນ ຖືເອົາການປະຕິບັດລາຍຈ່າຍເງິນເດືອນ, ເງິນອຸດໜູນເປັນບູລິມະສິດ.



ສະແກນດ້ວຍ CamScanner

2.2 ສືບຕໍ່ດຳເນີນການກວດກາຫຼັງລາຍຈ່າຍງົບປະມານ ໃນແຕ່ລະໄລຍະຢ່າງເຂັ້ມງວດ ເພື່ອຈຳກັດການລະເມີດວິໄນການເງິນ ເຊັ່ນ: ຈ່າຍເກີນແຜນ ແລະ ຈ່າຍບໍ່ຖືກເປົ້າໝາຍ.

2.3 ສືບຕໍ່ເພີ່ມທະວີວຽກງານ ການແກ້ໄຂຜົນການກວດສອບທີ່ກວດເຫັນຕິດພັນກັບ ບັນດາຂະແໜງການຂັ້ນແຂວງ ແລະ ຂັ້ນເມືອງ ຕ້ອງມີຂໍ້ມູນລະອຽດຊັດເຈນຕິດພັນກັບເປົ້າໝາຍທີ່ໄດ້ກວດສອບເຫັນ.

3. **ການຄຸ້ມຄອງງົບປະມານ**

3.1 ສືບຕໍ່ນຳໃຊ້ເຄື່ອງມືທີ່ທັນສະໄໝ ເຂົ້າໃນການຄຸ້ມຄອງລາຍຮັບ ຍັງບໍ່ທັນກວມເອົາທຸກເປົ້າໝາຍນຳໃຊ້ລະບົບ TaxRis ໃຫ້ຄົບຖ້ວນ, ຈຳນວນທີ່ເຂົ້າສູ່ລະບົບແລ້ວ ແຕ່ການຈັດຕັ້ງປະຕິບັດຕົວຈິງບໍ່ທັນມີປະສິດທິຜົນສູງເທົ່າທີ່ຄວນ.

3.2 ເພີ່ມທະວີວຽກງານຕິດຕາມກວດກາ ການປະຕິບັດລາຍຮັບ-ລາຍຈ່າຍງົບປະມານ ໃຫ້ໄປຕາມລະບຽບ ແລະ ກົດໝາຍກຳນົດຢ່າງເຂັ້ມງວດ.

3.3 ສືບຕໍ່ຄຸ້ມຄອງການເກັບຄ່າທຳນຽມ, ຄ່າບໍລິການ ແລະ ບັນດາກອງທຶນຕ່າງໆ ໂດຍທັນເປັນທັນສະໄໝຢ່າງລວມສູນ.

**ມາດຕາ 5 ການຈັດຕັ້ງປະຕິບັດ.**

1. ມອບໃຫ້ອົງການປົກຄອງແຂວງຊີ້ນຳ ພະແນກການເງິນ, ບັນດາພະແນກການ, ອົງການອ້ອມຂ້າງແຂວງ ແລະ ອົງການປົກຄອງເມືອງ ຈັດຕັ້ງປະຕິບັດມະຕິມະຕິສະບັບນີ້ ຢ່າງເຂັ້ມງວດ.
2. ມອບໃຫ້ຄະນະປະຈຳສະພາປະຊາຊົນແຂວງ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ບັນດາຄະນະກຳມະການ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມກວດກາ ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 6 ຜົນສັກສິດ.**

ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາປະຊາຊົນແຂວງ**

ເພັງນິລັນ ຄຳພັນເພັງ



ສະແກນດ້ວຍ CamScanner